ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ
ຄະນະປະຈໍາ

ເລກທີ 130 /ຄປຈ.ຕສ
ນະຄອນຫຼວງວຽງຈັນ, ວັນທີ 17 / 05 / 21

# ມະຕິ
## ຂອງຄະນະປະຈໍາສະພາແຫ່ງຊາດ
## ວ່າດ້ວຍການແຕ່ງຕັ້ງສະມາຊິກສະພາແຫ່ງຊາດ ເຄື່ອນໄຫວໃນຄະນະມິດຕະພາບລັດຖະສະພາ ລະຫວ່າງ ສະພາແຫ່ງຊາດລາວ ແລະ ສະພາປະຊາຊົນສູງສຸດ ແຫ່ງ ສປປ ເກົາຫລີ

- ອີງຕາມການເຫັນດີຂອງກອງປະຊຸມຄັ້ງປະຖົມມະລືກ ຂອງຄະນະປະຈໍາສະພາແຫ່ງຊາດ ຊຸດທີ IX, ຄັ້ງວັນທີ 21-23 ເມສາ 2021.
- ອີງຕາມໜັງສືສະເໜີຂອງກໍາມາທິການການຕ່າງປະເທດ ສະບັບເລກທີ 79/ກຕທ, ລົງວັນທີ 4/5/2021.

ເພື່ອເສີມຂະຫຍາຍສາຍພົວພັນຮ່ວມມືສອງຝ່າຍ, ໜັກແໜ້ນໃນສາຍພົວພັນມິດຕະພາບ ແບບເພື່ອນມິດຍຸດທະສາດ ຮ່ວມອຸດົມການອັນດຽວກັນ ລະຫວ່າງ ສະພາແຫ່ງຊາດລາວ ແລະ ສະພາປະຊາຊົນສູງສຸດ ສປປ ເກົາຫລີ.

### ຄະນະປະຈໍາສະພາແຫ່ງຊາດ ຕົກລົງ:

**ມາດຕາ 1** ເຫັນດີແຕ່ງຕັ້ງສະມາຊິກສະພາແຫ່ງຊາດ ເຄື່ອນໄຫວໃນຄະນະມິດຕະພາບລັດຖະສະພາ ລະຫວ່າງສະພາແຫ່ງຊາດລາວ ແລະ ສະພາປະຊາຊົນສູງສຸດ ສປປ ເກົາຫລີ, ຊຶ່ງປະກອບດ້ວຍບັນດາທ່ານ ດັ່ງນີ້:

1. ທ່ານ ຄໍາໃບ ດໍາລັດ, ຮອງປະທານສະພາແຫ່ງຊາດ, ສສຊ ເຂດ 12 ແຂວງຄໍາມ່ວນ, ເປັນປະທານ;
2. ທ່ານ ຄໍາມ່ວນ ຊຶມສີທາປັນຍາ, ຮອງປະທານກໍາມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ສສຊ ເຂດ 2 ແຂວງຜົ້ງສາລີ, ເປັນຮອງປະທານ;
3. ທ່ານ ຄໍາຟອງ ອິນມານີ, ສສຊ ເຂດ 3 ແຂວງຫຼວງນໍ້າທາ, ເປັນຄະນະ;
4. ທ່ານ ເພັງນີລັນ ຄໍາພັນເພັງ, ສສຊ ເຂດ 7 ແຂວງໄຊຍະບູລີ, ເປັນຄະນະ;
5. ທ່ານ ນາງ ມິນາພອນ ໄຊສົມພູ, ສສຊ ເຂດ 17 ແຂວງອັດຕະປື, ເປັນຄະນະ;
6. ທ່ານ ພັອ. ສີວິໄຊ ເພັງສັນຕິສຸກ, ສສຊ ເຂດ 6 ແຂວງຫຼວງພະບາງ, ເປັນຄະນະ;
7. ທ່ານ ບົວຄໍາ ຫຼວງອາໄພ, ສສຊ ເຂດ 10 ແຂວງວຽງຈັນ, ເປັນຄະນະ;
8. ທ່ານ ນາງ ທອງໃບ ໄຊຍະສານ, ສສຊ ເຂດ 14 ແຂວງສາລະວັນ, ເປັນຄະນະ;

9. ທ່ານ ສະແຫວງ ບັນທະວົງ, ສສຊ ເຂດ 13 ແຂວງສະຫວັນນະເຂດ, ເປັນຄະນະ;

10. ທ່ານ ພັທ. ວິໄຊທໍ່ ເພຍຫຼວງຈົ່ງເສີ, ສສຊ ເຂດ 18 ແຂວງໄຊສົມບູນ, ເປັນຄະນະ.

**ມາດຕາ 2** ບັນດາສະມາຊິກສະພາແຫ່ງຊາດ, ບັນດາກຳມາທິການ, ຄະນະເລຂາທິການ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິຕົກລົງສະບັບນີ້ ເປັນຢ່າງດີ.

**ມາດຕາ 3** ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຄະນະປະຈຳສະພາແຫ່ງຊາດ**

**ປະທານ**

**ປອ ໄຊສົມພອນ ພົມວິຫານ**